ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ເອກະສານລາຍງານການເງິນ (ທີ່ບທວນຄືນ)

ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

ສາລະບານ **ໜ້າ**

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ	1
ໃບລາຍງານຖານະການເງິນ	2
ໃບລາຍງານຜົນໄດ້ຮັບ	3
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	4
ໃບລາຍງານກະແສເງິນສົດ	5 - 6
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້	7 - 15

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນການເງິນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມິຖຸນາ 2025 ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີດຽວກັນ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້. ຜູ້ບໍລິຫານ ຂອງ ບໍລິສັດ ມີໜ້າທີຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານ ລາຍງານການເງິນກາງປີ ຂອງບໍລິສັດ. ຄວາມຮັບຜິດຊອບ ຂອງພວກເຮົາຄື ການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ ບົນພື້ນຖານການທົບທວນຄືນ ຂອງພວກເຮົາ.

ຂອບເຂດ ການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບ ມາດຕະຖານ ການທົບທວນຄືນ ແບບສາກົນ 2410 "ການທົບທວນຄືນ ເອກະສານລາຍງານການເງິນ ໂດຍຜູ້ກວດສອບ ອິດສະຫຼະ", ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກ ຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິເຄາະຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການ ທົບທວນຄືນໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ, ເພາະການກວດສອບ ແມ່ນໄດ້ປະຕິບັດຕາມ ມາດຕະຖານການກວດສອບ ສາກົນ. ເພາະສະນັ້ນ, ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກເຮົາໄດ້, ດັ່ງນັ້ນ ພວກເຮົາບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫຼຸບ

ບົນພື້ນຖານການທົບທວນຄືນ ຂອງພວກເຮົາ, ແມ່ນບໍ່ມີຫຍັງທີ່ເປັນສາລະສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນ ດັ່ງກ່າວບໍ່ໄດ້ສະໜອງຂໍ້ມູນທີ່ຖືກຕ້ອງ ໃນລັກສະນະຕາມຫຼັກການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 2 ໃນ ເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ.

ໂດຍ: ທ່ານ ພິງພັນ ດຳຣົງພັນອຸດົມ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 26 ສິງຫາ 2025

ໃບລາຍງານຖານະການເງິນ
ສິ້ນສຸດ ວັນທີ 30 ມິຖຸນາ 2025

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	401,681,710	3,539,121,912
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	5	7,312,714,885	7,745,187,515
ເຄື່ອງໃນສາງ, ສຸດທິ	6	428,905,846	210,538,164
ວັດສະດຸສະໜອງໂຮງງານ, ສຸດທິ	7	4,672,450,766	1,321,893,384
ຄ່າເຍື່ອນຊໍາລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ	8	808,913,978	603,660,182
ຊັບສິນໝຸນວຽນອື່ນໆ		6,645,383,595	6,388,100,770
ລວມຊັບສິນໝຸນວຽນ		**20,270,050,780**	**19,808,501,927**
ຊັບສິນບໍ່ໝຸນວຽນ			
ການລົງທຶນໃນບໍລິສັດໃນເຄືອ		240,422,000,000	240,422,000,000
ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ	9	18,177,798,548	19,030,412,147
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	10	17,758,644,123	18,014,164,440
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນຢີ້ນ້ຳ	11	13,762,122,458	9,158,137,050
ລວມຊັບສິນບໍ່ໝຸນວຽນ		**290,120,565,129**	**286,624,713,637**
ລວມຊັບສິນ		**310,390,615,909**	**306,433,215,564**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	12	248,142,990,823	240,082,188,772
ໜີ້ສິນໝຸນວຽນອື່ນໆ	13	251,590,909	49,757,316
ເງິນກູ້ຢືມໄລຍະສັ້ນ	14	2,000,000,000	2,000,000,000
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	15	879,793,125	840,316,500
ລວມໜີ້ສິນໝຸນວຽນ		**251,274,374,857**	**242,972,262,588**
ໜີ້ສິນບໍ່ໝຸນວຽນ			
ໜີ້ສິນບໍ່ໝຸນວຽນອື່ນໆ		18,223,424,449	18,223,424,449
ລວມໜີ້ສິນບໍ່ໝຸນວຽນ		18,223,424,449	18,223,424,449
ລວມໜີ້ສິນ		**269,497,799,306**	**261,195,687,037**
ທຶນເຈົ້າຂອງ			
ທຶນຈົດທະບຽນ		50,000,000,000	50,000,000,000
ສ່ວນເພີ່ມທຶນ		3,269,466,406	3,269,466,406
ຄັງສະສົມຕາມລະບຽບການ		932,158,245	932,158,245
ກໍາໄລ/(ຂາດທຶນ) ສະສົມລໍຖ້າແບ່ງປັນ		(13,308,808,048)	(8,964,096,124)
ລວມທຶນເຈົ້າຂອງ		**40,892,816,603**	**45,237,528,527**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**310,390,615,909**	**306,433,215,564**

ທ່ານ ພິງຖານ ພິດຈໍານິງ
ຮອງຜູ້ອໍານວຍການ
ວັນທີ: 26 ສິງຫາ 2025

ທ່ານ ວັນສະເຫຼີມ ສີສຸຄໍາມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 15 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

	ບິດ ອະທິບາຍ	ທີ່ບທອນຄືນ 30 ມິຖຸນາ 2025 ກີບ	ທີ່ບທອນຄືນ 30 ມິຖຸນາ 2024 ກີບ
ລາຍຮັບຈາກການຂາຍ		17,761,206,234	20,370,170,954
ຕົ້ນທຶນໃນການຂາຍ		(16,789,210,819)	(16,834,112,978)
ກຳໄລລວມ		**971,995,415**	**3,536,057,976**
ລາຍຈ່າຍການຂາຍ ແລະ ບໍລິຫານ		(5,431,111,284)	(5,625,721,845)
ລາຍຮັບອື່ນໆ		1,069,091,888	1,214,287,061
ຂາດທຶນຈາກອັດຕາແລກປ່ຽນ		(826,555,229)	(923,055,309)
ຂາດທຶນຈາກການດຳເນີນງານ		**(4,216,579,210)**	**(1,798,432,117)**
ລາຍຈ່າຍທາງການເງິນ		(128,132,714)	(103,139,794)
ຂາດທຶນກ່ອນຫັກອາກອນກຳໄລ		**(4,344,711,924)**	**(1,901,571,911)**
ອາກອນກຳໄລ	16	(-)	(-)
ຂາດທຶນສຸດທິສຳລັບງວດ		**(4,344,711,924)**	**(1,901,571,911)**
ຂາດທຶນຕໍ່ຮຸ້ນ			
ຂາດທຶນພື້ນຖານຕໍ່ຮຸ້ນ	17	(43.45)	(19.01)

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 26 ສິງຫາ 2025

ທ່ານ ອັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 15 ແມ່ນເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

	ທຶນຈົດທະບຽນ ກີບ	ສ່ວນເພີ່ມທຶນ ກີບ	ກຳໄລ/(ຂາດທຶນສະສົມ) ຄ້າງສະສົມຕາມ ລະບຽບການ ກີບ	ກຳໄລ/(ຂາດທຶນສະສົມ) ລໍຖ້າແບ່ງປັນ ກີບ	ລວມ ກີບ
ຍອດຍົກມາ					
ໃນວັນທີ 1 ມັງກອນ 2025 - ກວດສອບ	50,000,000,000	3,269,466,406	932,158,245	(8,964,096,124)	45,237,528,527
ຂາດທຶນໃນງວດ	(-)	(-)	(-)	(4,344,711,924)	(4,344,711,924)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2025 - ທີ່ບທວນຄືນ	**50,000,000,000**	**3,269,466,406**	**932,158,245**	**(13,308,808,048)**	**40,892,816,603**
ຍອດຍົກມາ					
ໃນວັນທີ 1 ມັງກອນ 2024 - ກວດສອບ	50,000,000,000	3,269,466,406	932,158,245	(9,023,837,182)	45,177,787,469
ຂາດທຶນໃນງວດ	(-)	(-)	(-)	(1,901,571,911)	(1,901,571,911)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2024 - ທີ່ບທວນຄືນ	**50,000,000,000**	**3,269,466,406**	**932,158,245**	**(10,925,409,093)**	**43,276,215,558**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 26 ສິງຫາ 2025

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 15 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

	ບິດ ອະທິບາຍ	ທີ່ຍທອນຄົນ 30 ມິຖຸນາ 2025 ກີບ	ທີ່ຍທອນຄົນ 30 ມິຖຸນາ 2024 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ຂາດທຶນກ່ອນຫັກອາກອນກຳໄລ		**(4,344,711,924)**	**(1,901,571,911)**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽນ	9	932,926,391	1,125,087,457
ຄ່າຕັດຮອນ	10	481,044,711	464,860,249
ກຳໄລຈາກການສະສາງຊັບສິນບັດຄົງທີ່ ມິຕິວຕົນ	9	(60,000,000)	(-)
ການສູນເສຍມູນຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍ ປາມ	8	32,919,448	36,298,242
ການສູນເສຍມູນຄ່າເຍື່ອນຊຳລະຕົ້ນທຶນການປູກ ຕົ້ນຢີ້ນ້ຳ	11	262,258,453	(-)
ຂາດທຶນ/(ກຳໄລ)ຈາກອັດຕາແລກປ່ຽນ		820,773,084	(498,299,082)
ລາຍຈ່າຍອັດຕາດອກເບ້ຍ		128,132,714	103,139,794
ຄ່າສູນເສຍມູນຄ່າໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(-)	480,996,000
ເກັບຄືນຄ່າສູນເສຍມູນຄ່າໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	5	(202,102,451)	(-)
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		634,575,081	753,103,351
ເຄື່ອງໃນສາງ, ສຸດທິ		(218,367,682)	(52,324,589)
ວັດສະດຸສະໜອງ, ສຸດທິ		(3,350,557,382)	(1,630,834,720)
ເຍື່ອນລຳຖ້າຕັດຕົ້ນທຶນການປູກຕົ້ນປາມ-ເບ້ຍປາມເພື່ອຂາຍ		(238,173,244)	39,340,511
ຊັບສິນໝຸນວຽນອື່ນໆ		(257,282,825)	(2,795,722,363)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		5,547,987,094	2,632,755,296
ໜີ້ສິນໝຸນວຽນອື່ນໆ		205,139,843	38,926,553
ເງິນສົດໃຊ້ສຸດທິຈາກ/(ໃຊ້ໃນ) ຈາກກິດຈະກຳການດຳເນີນງານ		**374,561,311**	**(1,204,245,212)**
ດອກເບ້ຍທີ່ຈ່າຍ		(128,132,714)	(103,139,794)
ເງິນສົດໃຊ້ສຸດທິຈາກ/(ໃຊ້ໃນ) ຈາກກິດຈະກຳການດຳເນີນງານ		**246,428,597**	**(1,307,385,006)**

ທ່ານ ພົງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 26 ສິງຫາ 2025

ທ່ານ ວັນສະເຫຼີມ ສີສຸດຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 15 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

	ບິດ ອະທິບາຍ	ທີ່ຍທອນຄົນ 30 ມິຖຸນາ 2025 ກີບ	ທີ່ຍທອນຄົນ 30 ມິຖຸນາ 2024 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສົມບັດຄົງທີ່ ມີຕົວຕົນ	9	(278,756,036)	(2,254,723,016)
ຈ່າຍຄ່າຕົ້ນທຶນການປູກຕົ້ນປາມ	10	(225,524,394)	(168,470,695)
ຈ່າຍຄ່າຕົ້ນທຶນການປູກຕົ້ນຢີ້ນ້ຳ	11	(1,032,401,513)	(2,243,912,275)
ຮັບຈາກການສະສາງຊັບສົມບັດຄົງທີ່ ມີຕົວຕົນ	9	60,000,000	(-)
ຈ່າຍເງິນການລົງທຶນໃນບໍລິສັດໃນເຄືອ		(1,912,160,419)	(2,841,587,799)
ເງິນສົດໃຊ້ສຸດທ ໃຊ້ໃນ ກິດຈະກຳການລົງທຶນ		**(3,388,842,362)**	**(7,508,693,785)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມໄລຍະສັ້ນ	14	2,000,000,000	2,000,000,000
ຈ່າຍເງິນຄືນຈາກການກູ້ຢືມ ໄລຍະສັ້ນ	14	(2,000,000,000)	(2,000,000,000)
ຈ່າຍເງິນຕົ້ນຄືນຈາກການເຊົ່າຊື້		(-)	(240,379,107)
ເງິນສົດໃຊ້ສຸດທ ໃຊ້ໃນ ໃນກິດຈະກຳການເງິນ		**(-)**	**(240,379,107)**
ຫຸດລົງສຸດທ ໃນເງິນສົດ ແລະ ລາຍການທຽບເທົ່າ ເງິນສົດ		**(3,142,413,765)**	**(9,056,457,898)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ	4	3,539,121,912	14,381,978,713
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າ ເງິນສົດ		4,973,563	1,373,493,243
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ	**4**	**401,681,710**	**6,699,014,058**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ຍອດໜີ້ຕ້ອງສົ່ງຈາກການເຊົ່າຊື້ຄ້າງຈ່າຍສຳລັບຍານພາຫະນະ ແລະ ເຄື່ອງໜີບປາມທີ່ຊື້ໃນປີຜ່ານມາ		1,687,516,530	1,808,277,273
ການໄດ້ມາຂອງຕົ້ນຢີ້ນ້ຳ ທີ່ຍັງບໍ່ໄດ້ຊຳລະ	11	4,774,449,234	(-)
ໂອນໄປລົງທຶນໃນບໍລິສັດໃນເຄືອ:			
- ຕົ້ນທຶນການປູກ ຕົ້ນຢີ້ນ້ຳ	11	1,139,050,130	(-)

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 26 ສິງຫາ 2025

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 – 15 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1 ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດ ມະຫາຊົນ, ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດໄດ້ມີການຈຳໜ່າຍຮຸ້ນສາມັນຢູ່ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດໃນ ວັນທີ 25 ກັນຍາ 2017.

ກິດຈະກຳຫຼັກຂອງບໍລິສັດ ແມ່ນ ອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາะປູກເບ້ຍຕົ້ນປາມ (Palm), ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ. ນອກຈາກນີ້ບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພาะປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້ ບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນ: ນ້ຳມັນປຸງແຕ່ງອາຫານ ແລະ ແປ້ງນົວ ຈາກປະເທດໄທ ເພື່ອຈຳໜ່າຍໃນ ສປປ ລາວ.

ເດືອນ ກັນຍາ ປີ 2023, ບໍລິສັດ ໄດ້ມີການລົງທຶນໃນ ບໍລິສັດ ລາວດີ ກຣີນ ຈຳກັດຜູ້ດຽວ ໃນຊັດສ່ວນ 100%, ເຊິ່ງມູນຄ່າການລົງທຶນແມ່ນ 240,422,000,000 ກີບ (ຈຳນວນ 100,000 ຮຸ້ນ, ລາຄາຕໍ່ຮຸ້ນແມ່ນ 2,404,220). ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025, ບໍລິສັດ ໄດ້ຈ່າຍເງິນລົງທຶນເພີ່ມມູນຄ່າ 3,051,210,549 ກີບ (2024: 10,944,555,481 ກີບ). ນະວັນທີ 30 ມິຖຸນາ 2025, ບໍລິສັດໄດ້ຖອກເງິນລົງທຶນໃນບໍລິສັດໃນເຄືອແລ້ວຈຳນວນ 13,995,766,030 ກີບ (ໃນນັ້ນຖອກເປັນຊັບສິນມູນຄ່າ 6,282,156,612 ກີບ ແລະ ຖອກເປັນເງິນສົດມູນຄ່າ 7,713,609,418 ກີບ), ສ່ວນທີ່ຍັງເຫຼືອມູນຄ່າ 226,426,233,970 ກີບ ແມ່ນຮັບຮູ້ເປັນໜີ້ຕ້ອງສົ່ງອື່ນໆໃຫ້ກັບບໍລິສັດໃນເຄືອ (ບົດອະທິບາຍທີ 12).

ກິດຈະກຳຫຼັກຂອງບໍລິສັດໃນເຄືອ ແມ່ນການປູກຕົ້ນໄມ້ກະຖິນນາລົງໃຫ້ມີຄຸນນະພາບ ແລະ ມີຄວາມຍືນຍົງເພື່ອເປັນຜະລິດຕະພັນ ພ້ອມສ້າງມູນຄ່າສູງສຸດໃນການສົ່ງອອກສູ່ຕະຫຼາດພາຍນອກ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກຜູ້ອຳນວຍການໃນວັນທີ 26 ສິງຫາ 2025.

2 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນ 6 ເດືອນຕົ້ນປີສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2024.

2 ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

ຂໍ້ສົມມຸດຖານການດຳເນີນງານຕໍ່ເນື່ອງ

ນະວັນທີ 30 ມິຖຸນາ 2025, ໜີ້ສິນໝຸນວຽນ ຂອງບໍລິສັດແມ່ນເກີນຊັບສິນໝຸນວຽນມູນຄ່າ 231,004,324,077 ກີບ. ບໍລິສັດ ຍັງໄດ້ລາຍງານຜົນການດຳເນີນງານຂາດທຶນສຸດທິ ສຳລັບປີສິ້ນສຸດວັນທີ 31 ທັນວາ 2023 ແລະ 2024, ເຊັ່ນດຽວກັນກັບໄລຍະ ຫົກເດືອນຕົ້ນປີສິ້ນສຸດໃນວັນທີ 30 ມິຖຸນາ 2025. ເງື່ອນໄຂເຫຼົ່ານີ້ຊີ້ໃຫ້ເຫັນຄວາມສ່ຽງດ້ານສະພາບຄ່ອງ.

ຢ່າງໃດກໍ່ຕາມ, ບໍລິສັດໄດ້ຮັບຈົດໝາຍຢືນຢັນຢ່າງເປັນທາງການຈາກພາກສ່ວນກ່ຽວຂ້ອງ ແລະ ເຈົ້າໜີ້ການຄ້າທີ່ລະບຸວ່າ ຈະບໍ່ ຮຽກຮ້ອງການຊຳລະຄືນໜີ້ສິນທັງໝົດ 226,426,233,970 ກີບ ແລະ 13,310,838,234 ກີບ ຕາມລຳດັບ ພາຍໃນ 12 ເດືອນ ຕໍ່ໜ້ານັບແຕ່ວັນທີ 30 ມິຖຸນາ 2025 ເປັນຕົ້ນໄປ. ນອກຈາກນັ້ນ, ຜູ້ຖືຮຸ້ນລາຍໃຫຍ່ຍັງໄດ້ຢັ້ງຢືນວ່າ ຈະໃຫ້ການຊ່ວຍເຫລືອດ້ານ ການເງິນທີ່ພຽງພໍກັບບໍລິສັດຕາມຄວາມຈຳເປັນ, ເພື່ອໃຫ້ສືບຕໍ່ດຳເນີນທຸລະກິດ ແລະ ບັນລຸໄດ້ຕາມຄວາມຕ້ອງການ. ນອກຈາກນັ້ນ, ບໍລິສັດຍັງໄດ້ຍື່ນສະເໜີແຜນການດຳເນີນທຸລະກິດຢ່າງເປັນທາງການຕໍ່ຕະຫຼາດຫຼັກຊັບລາວ (ຕລຊລ) ເພື່ອແກ້ໄຂ ແລະ ຟື້ນຟູ ການດຳເນີນທຸລະກິດໃຫ້ກັບມາມີກຳໄລ ແລະ ສາມາດຄຸ້ມກັນການຂາດທຶນສຸດທິໃນໄລຍະຕໍ່ໄປ.

ສຳລັບໄລຍະເວລາ 6 ເດືອນສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດມີກະແສເງິນສົດໃນທາງບວກຈາກກິດຈະກຳການດຳເນີນງານ, ເຊິ່ງສອດຄ່ອງກັບໄລຍະເວລາ 12 ເດືອນທີ່ສິ້ນສຸດໃນວັນທີ 31 ທັນວາ 2024, ນອກຈາກນັ້ນ ສ່ວນປ່ຽນແປງທຶນເຈົ້າຂອງສະແດງ ເປັນຄ່າບວກນະວັນທີ 30 ມິຖຸນາ 2025. ຜູ້ບໍລິຫານເຊື່ອວ່າ, ອີງໃສ່ການສະໜັບສະໜູນທາງດ້ານການເງິນຈາກຜູ້ຖືຮຸ້ນ, ແຜນ ທຸລະກິດສະບັບປັບປຸງ ແລະ ຄວາມສາມາດຂອງບໍລິສັດໃນການສ້າງກະແສເງິນສົດຈາກການດຳເນີນງານ, ການຈັດທຳເອກະສານ ລາຍງານການເງິນບົນພື້ນຖານສົມມຸດຖານການດຳເນີນງານຕໍ່ເນື່ອງຈຶ່ງເຫັນວ່າເໝາະສົມສຳລັບການເອກະສານລາຍງານການເງິນ ສະບັບນີ້.

3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນທົບທວນຄືນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ, ການຄາດຄະເນ ແລະ ການສົມມຸດຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍ ຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການສ້າງເອກະສານລາຍງານການເງິນທົບທວນຄືນ, ຜູ້ບໍລິຫານຕ້ອງມີການຕັດສິນໃຈທີ່ສຳຄັນ ໃນການນຳໃຊ້ນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາອັນສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ສຳລັບການສ້າງເອກະສານລາຍ ງານການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024.

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ເງິນສົດໃນມື	49,064,466	4,698,000
ເງິນຝາກໃນທະນາຄານທີ່ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການ[i]	352,617,244	3,534,423,912
	401,681,710	**3,539,121,912**

(i) ເງິນຝາກໃນທະນາຄານ ລວມມີສາມສະກຸນເງິນ ແມ່ນມີ ສະກຸນ ໂດລາ, ກີບ ແລະ ບາດ ໃນບັນຊີເງິນຝາກກະແສລາຍວັນກັບ ທະນາຄານພາຍໃນປະເທດ ແລະ ທະນາຄານສາຂາຕ່າງປະເທດ.

5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ໜີ້ຕ້ອງຮັບການຄ້າ[i]	8,655,182,285	9,289,757,366
ໜີ້ຕ້ອງຮັບອື່ນໆ	339,600,000	339,600,000
ຫັກ: ຄ່າສູນເສຍມູນຄ່າ[ii]	(1,682,067,400)	(1,884,169,851)
	7,312,714,885	**7,745,187,515**

(i) ໜີ້ຕ້ອງຮັບການຄ້າປະກອບມີໜີ້ຕ້ອງຮັບຈາກເບ້ຍຕົ້ນປາມ, ນ້ຳມັນກາຊອນ ແລະ ການຂາຍນ້ຳມັນປາມດິບພາຍໃນປີ.

(ii) ລາຍການເຄື່ອນໄຫວສຳລັບໜີ້ສິງໄສຈະເສຍແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2025 - ກວດສອບ	1,884,169,851
ເພີ່ມຂຶ້ນ	-
ເກັບຄືນໜີ້ສິງໄສຈະເສຍ[iii]	(202,102,451)
ຍອດເຫຼືອທ້າຍງວດ ໃນວັນທີ 30 ມິຖຸນາ 2025 - ທີ່ບທວນຄືນ	**1,682,067,400**

(iii) ບໍລິສັດສຳເລັດການເກັບຄືນຈຳນວນເງິນທີ່ເຄີຍຕັ້ງເປັນໜີ້ສິງໄສຈະເສຍກ່ອນໜ້ານັ້ນ, ສິ່ງຜົນໃຫ້ມີການຫັນລ້າງຄືນໜີ້ສິງໄສຈະເສຍ.

6. ເຄື່ອງໃນສາງ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ສິນຄ້າສຳເລັດຮູບ[i]	275,955,419	155,623,245
ຜະລິດຕະພັນພວມປຸງແຕ່ງ	152,950,427	54,914,919
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້າ	(-)	(-)
	428,905,846	**210,538,164**

(i) ສິນຄ້າສຳເລັດຮູບສ່ວນໃຫຍ່ປະກອບມີ: ຜະລິດຕະພັນເສດເຫຼືອ, ເມັດປາມທີ່ໃຊ້ໃນການແປຮູບເປັນນ້ຳມັນປາມດິບ ແລະ ນ້ຳມັນເຊື້ອເພີ່ງຊີວະພາບ. ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດບໍ່ມີການສະສາງສິນຄ້າໃນສາງ.

7. ອັດສະຄຸສະໜອງໂຮງງານ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ປຸ໋ຍສຳລັບການປູກຕົ້ນປາມ	265,173,274	520,696,279
ນ້ຳມັນປາມດິບ (CPO)	3,505,622,101	474,693,590
ນ້ຳມັນກາຊອນ	335,956	100,955,542
ອຸປະກອນໂຮງງານອື່ນໆ[i]	901,319,435	225,547,973
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້ຳ	(-)	(-)
	4,672,450,766	**1,321,893,384**

(i) ອັດສະຄຸສະໜອງໂຮງງານອື່ນໆຫຼັກໆປະກອບມີ: ຂີ້ເຈຍ, ເຄມີ ແລະ ເມັດປາມສຳລັບປູກເບ້ຍຕົ້ນປາມ. ໄລຍະ 6 ເດືອນ ຕົ້ນ ປີ ສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດບໍ່ມີການສະສາງອັດສະຄຸສະໜອງໂຮງງານ.

8. ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ

ເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມ ຕົ້ນທຶນແມ່ນປະກອບມີທັງ ລາຄາຊື້ເມັດປາມ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບ້ຍຕົ້ນ ປາມ ເຊັ່ນ: ຄ່າແຮງງານໃນການປູກ ແລະ ຄ່າປຸ໋ຍ.

ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດໄດ້ສະສາງເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມທີ່ຕາຍອອກມູນຄ່າ 32,919,448 ກີບ ແລະ ໄດ້ຮັບຮູ້ຄ່າດັ່ງກ່າວເຂົ້າໃນໃບລາຍງານຜົນໄດ້ຮັບ.

ລາຍການເຄື່ອນໄຫວສຳລັບເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ ແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2025 - ກວດສອບ	603,660,182
ເພີ່ມຂຶ້ນ	238,173,244
ສະສາງອອກ	(32,919,448)
ຍອດເຫຼືອທ້າຍງວດ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**808,913,978**

9 ຊັບສິນຄົງທີ່ ມີຕົວຕົນ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2025 - ກວດສອບ	**19,030,412,147**
ເພີ່ມຂຶ້ນ	278,756,036
ໂອນໄປຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນຢີ້ນ້ຳ	(198,443,244)
ຄ່າຫຼ້ຍຫ້ຽນ	(932,926,391)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທີ່ບທວນຄືນ	**18,177,798,548**
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025	
ຕົ້ນທຶນ	38,911,828,878
ຫັກ: ຄ່າຫຼ້ຍຫ້ຽນສະສົມ	(20,734,030,330)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທີ່ບທວນຄືນ	**18,177,798,548**

ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດໄດ້ສະສາງຍານພາຫະນະອອກໃຫ້ລູກຄ້າ. ພາຫະນະດັ່ງກ່າວໄດ້ຖືກຫັກ ຄ່າຫຼ້ຍຫ້ຽນໝົດແລ້ວ, ບໍ່ມີມູນຄ່າສຸດທິເຫຼືອໃນຂະນະສະສາງ. ບໍລິສັດໄດ້ຮັບຮູ້ກຳໄລໃນການສະສາງເປັນມູນຄ່າ 60,000,000 ກີບ, ເຊິ່ງຖືກສະແດງໃນໃບລາຍງານຜົນໄດ້ຮັບ.

10 ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2025 - ກວດສອບ	**18,014,164,440**
ເພີ່ມຂຶ້ນ	225,524,394
ຫັກ: ຄ່າຕັດຮອນ	(481,044,711)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທີ່ບທວນຄືນ	**17,758,644,123**
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025	
ຕົ້ນທຶນເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ	24,891,510,241
ຫັກ: ຄ່າຕັດຮອນສະສົມ	(7,132,866,118)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທີ່ບທວນຄືນ	**17,758,644,123**

ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ມີຕົ້ນທຶນການປູກເຍື່ອນໄດ້ຕັດຮອນ ມູນຄ່າ 481,044,711 ກີບ (2024: 464,860,249) ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ.

11 ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນຢີນ້ຳ

ຕົ້ນທຶນການປູກ ຕົ້ນຢີນ້ຳລວມມີ ຕົ້ນທຶນຊື້ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນຢີນ້ຳ ເຊັ່ນ: ຄ່າແຮງງານ ແລະ ຄ່າປຸ໋ຍ.

ລາຍການເຄື່ອນໄຫວສຳລັບຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນຢີນ້ຳ ແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ສຸດທ ໃນວັນທ 1 ມັງກອນ 2025 - ກວດສອບ	**9,158,137,050**
ເພີ່ມຂຶ້ນ	5,806,850,747
ໂອນມາຈາກຊັບສົມບັດຖາວອນ	198,443,244
ໂອນອອກໄປໃຫ້ບໍລິສັດໃນເຄືອ[i]	(1,139,050,130)
ການສູນເສຍມູນຄ່າ	(262,258,453)
ຍອດເຫຼືອທ້າຍງວດ ສຸດທ ໃນວັນທ 30 ມິຖຸນາ 2025 – ທີ່ບທວນຄືນ	**13,762,122,458**

(i) ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທ 30 ມິຖຸນາ 2025, ບໍລິສັດໄດ້ໂອນເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນຢີນ້ຳອອກໄປໃຫ້ບໍລິສັດໃນເຄືອ. ການໂອນແມ່ນເພື່ອເພີ່ມເງິນຖອກທຶນຈົດທະບຽນທີ່ເປັນວັດຖ. ມູນຄ່າໂອນທັງໝົດແມ່ນ 1,139,150,130 ກີບ (ບົດອະທິບາຍທ 12).

12 ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ໜີ້ຕ້ອງສົ່ງການຄ້າ[i]	19,932,706,653	9,398,887,632
ໜີ້ຕ້ອງສົ່ງອື່ນໆ[ii]	1,784,050,200	1,205,856,621
ໜີ້ຕ້ອງສົ່ງອື່ນໆ-ບໍລິສັດໃນເຄືອ[iii]	226,426,233,970	229,477,444,519
	248,142,990,823	**240,082,188,772**

(i) ໜີ້ຕ້ອງສົ່ງການຄ້າສົ່ງສ່ວນໃຫຍ່ປະກອບມີ ຄ່ານ້ຳມັນປາມດິບ ແລະ ນ້ຳມັນພືດຈາກຕ່າງປະເທດໃນສຳລັບໄລະຍະ 6 ເດືອນຕົ້ນປີ.

(ii) ໜີ້ຕ້ອງສົ່ງອື່ນໆ ສ່ວນໃຫຍ່ປະກອບມີ ຄ່າທີ່ປຶກສາຊ່ຽວຊານ, ເງິນເດືອນຄ້າງຈ່າຍ ແລະ ຄ່າເຄື່ອງໜີບໝາກປາມ.

(iii) ສະແດງເຖິງ ຮຸ້ນທີ່ຍັງບໍ່ໄດ້ຖອກໃຫ້ກັບບໍລິສັດໃນເຄືອ. ສຳລັບໄລະຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025, ບໍລິສັດໄດ້ມີການຖອກທຶນເພີ່ມໃນບໍລິສັດໃນເຄືອມູນຄ່າ 3,051,210,549 ກີບ (ໃນນັ້ນຖອກເປັນຊັບສົມມູນຄ່າ 1,139,050,130 ກີບ ແລະ ຖອກເປັນເງິນສົດທັງໝົດມູນຄ່າ 1,912,160,419 ກີບ). ໃບອະນຸຍາດການລົງທຶນຂອງບໍລິສັດຈຳເປັນຕ້ອງຈ່າຍໃຫ້ຄົບຖ້ວນພາຍໃນ 2 ປີຫຼັງຈາກວັນທີ່ອອກໃບຢັ້ງຢືນການລົງທຶນ (ບົດອະທິບາຍ 12).

13 ໜີ້ສິນໝຸນວຽນອື່ນໆ

	ທິບທອນຄົນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ເງິນເດືອນຄ້າງຈ່າຍ	56,656,909	49,757,316
ເງິນຮັບລ່ວງໜ້າຈາກລູກຄ້າ[(i)]	194,934,000	(-)
	251,590,909	**49,757,316**

(i) ບໍລິສັດໄດ້ຮັບເງິນລ່ວງໜ້າຈາກລູກຄ້າເພື່ອມັດຈຳໃນການຊື້ຜະລິດຕະພັນເສດເຫຼືອນຳບໍລິສັດ. ມູນຄ່າດັ່ງກ່າວໄດ້ບັນທຶກເປັນໜີ້ສິນໝຸນວຽນອື່ນໆ ແລະ ຈະສະສາງເມື່ອສິນຄ້າດັ່ງກ່າວໄດ້ຖືກສົ່ງມອບໃຫ້ລູກຄ້າ.

14 ເງິນກູ້ຢືມໄລຍະສັ້ນ

	ກີບ
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2025 - ກວດສອບ	**2,000,000,000**
ເພີ່ມຂຶ້ນ	2,000,000,000
ຊຳລະຄືນ	(2,000,000,000)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທິບທອນຄົນ	**2,000,000,000**

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດໄດ້ຖອນເງິນກູ້ໄລຍະສັ້ນເພີ່ມເຕີມຈາກທະນາຄານໄຊ່ງ່ອນ-ຮ່າໂນ້ຍ ລາວ ຈຳກັດ ມູນຄ່າ 2,000,000,000 ກີບ ແລະ ໄດ້ມີການຊຳລະເງິນຕົ້ນຄືນໃຫ້ແກ່ທະນາຄານມູນຄ່າ 2,000,000,000 ກີບ.

15 ໜີ້ຕ້ອງສົ່ງຈາກການເຊົ່າຊື້

ບໍລິສັດໄດ້ເຊັນສັນຍາເຊົ່າຊື້ສິນເຊື່ອລົດ 2 ຄັນ ເປັນເງິນບາດ ແລະ ເງິນກີບ.

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດບໍ່ມີການເຊົ່າຊື້ເພີ່ມ ແລະ ບໍ່ມີການຊຳລະເງິນຕົ້ນພາຍໃຕ້ສັນຍາດັ່ງກ່າວ.

16 ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນກຳໄລ ໃນຮູບແບບຂອງອາກອນກຳໄລ ໃນອັດຕາ ແມ່ນ 20% ຂອງກຳໄລທາງອາກອນ. ນອກຈາກນີ້, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງອີງຕາມລະບຽບຂອງຕະຫຼາດຫຼັກຊັບ ບໍລິສັດຈະໄດ້ຮັບສ່ວນຫຼຸດຕື່ມອີກ 5% ຈາກອັດຕາອາກອນກຳໄລປະຈຳປີ ເປັນເວລາ 4 ປີນັບຈາກປີທີ່ ບໍລິສັດໄດ້ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງ ສປປລາວ. ອັດຕາດັ່ງກ່າວແມ່ນໃຊ້ ໄດ້ຈົນເຖິງວັນທີ 31 ທັນວາ 2021 ແລະ ອັດຕາ 20% ແມ່ນເລີ່ມນຳໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2022 ເປັນຕົ້ນໄປ.

ລະບົບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື້ອຍໆ ເຊິ່ງມັນບໍ່ຈະແຈ້ງ. ຂັດແຍ້ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັບທີ່ມີຢູ່ໃນໜ່ວຍງານໄລ່ລຽງອາກອນ ແລະ ເຂດອຳນາດສານ. ອາກອນອາດມີການທົບທວນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ ຜູ້ເຊິ່ງສາມາດປັບໃໝ ແລະ ລົງໂທດ.

ປັດໄຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານ ເຊື່ອວ່າວ່າ ໄດ້ຈັດກຽມຢ່າງພຽງພໍສຳລັບໜີ້ຕ້ອງສົ່ງອາກອນ ຕາມການຕີຄວາມຂອງ ກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມ ເຈົ້າໜ້າທີ່ທີ່ກ່ຽວຂ້ອງອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

ໄລຍະສຳລັບ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2025 ບໍລິສັດລາວອາໂກຣເທັກມະຫາຊົນບໍ່ໄດ້ຕັ້ງໜີ້ຄ້າງຈ່າຍອາກອນກຳໄລ ເນື່ອງຈາກການຂາດທຶນຈາກການດຳເນີນງານ.

17 ຂາດທຶນຕໍ່ຮຸ້ນ

ຂາດທຶນພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງຂາດທຶນຕໍ່ຜູ້ຖືຮຸ້ນໂດຍຄິດໄລ່ແບບອັດຕາຖ່ວງນ້ຳໜັກສະເລ່ຍຂອງ ຈຳນວນຮຸ້ນສາມັນໃນລະຫວ່າງງວດ.

	ທົບທວນຄືນ 30 ມິຖຸນາ 2025	ທົບທວນຄືນ 30 ມິຖຸນາ 2024
ຂາດທຶນສຳລັບຜູ້ຖືຮຸ້ນສາມັນ (ກີບ)	**(4,344,711,924)**	**(1,901,571,911)**
ອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ຄົງເຫຼືອ (ຮຸ້ນ)	100,000,000	100,000,000
ຂາດທຶນພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	(43.45)	(19.01)

18 ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍ ຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

18.1 ຍອດຄົງເຫຼືອລາຍການພົວພັນກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 30 ມິຖຸນາ 2025 ມີດັ່ງລຸ່ມນີ້:

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ໜີ້ຕ້ອງສົ່ງໃຫ້:		
ບໍລິສັດໃນເຄືອ	226,426,233,970	229,477,444,519

19 ເຫດການທີ່ເກີດຂຶ້ນພາຍຫຼັງ ມື້ລາຍງານ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນຫລັງຈາກວັນທີ ໃນໃບຕຸ່ນດ່ຽງ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານ ລາຍງານການເງິນ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2025.